ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 293/ລບ

ນະຄອນຫຼວງວຽງຈັນ, ວັນທີ 29.08.2022

# ດຳລັດ

# ວ່າດ້ວຍຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງຍຸຕິທຳ ສະບັບເລກທີ 936/ກຍ, ລົງວັນທີ 19 ກໍລະກົດ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການສ້າງຕັ້ງ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເພື່ອໃຫ້ຫ້ອງການດັ່ງກ່າວ ສາມາດເຄື່ອນໄຫວ ຢ່າງມີປະສິດທິພາບ, ມີປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສົ່ງເສີມການດຳເນີນທຸລະກິດໃຫ້ຂະຫຍາຍຕົວ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແມ່ນການຈັດຕັ້ງ ທີ່ມີລັກສະນະວິຊາຊີບສັງຄົມ ແລະ ກົດໝາຍ, ມີຖານະນິຕິບຸກຄົນ ທີ່ເຄື່ອນໄຫວບໍລິການຮັບໃຊ້ສັງຄົມ, ມີພາລະບົດບາດ ອຳນວຍຄວາມສະດວກໃຫ້ແກ່ຄູ່ກໍລະນີ, ຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ ໃນການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ນິຕິບຸກຄົນທີ່ເຄື່ອນໄຫວບໍລິການຮັບໃຊ້ສັງຄົມ** ໝາຍເຖິງ ການຈັດຕັ້ງທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງ, ມີສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ເຄື່ອນໄຫວບໍລິການ, ອຳນວຍຄວາມສະດວກໃຫ້ແກ່ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍຄວາມສະໝັກໃຈ ໂດຍບໍ່ນຳເອົາລາຍຮັບຂອງຕົນມາແບ່ງປັນກັນ;

2. **ວິຊາຊີບສັງຄົມ ແລະ ກົດໝາຍ** ໝາຍເຖິງ ຂະແໜງອາຊີບ ທີ່ໃຫ້ການບໍລິການຮັບໃຊ້ສັງຄົມ ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ;

3. **ຄ່າບໍລິການ** ໝາຍເຖິງ ຄ່າບໍລິການທາງດ້ານວິຊາການທີ່ເກັບເປັນເງິນຈາກຄູ່ກໍລະນີ ໃນການໃຊ້ບໍລິການຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

4. **ຜູ້ໄກ່ເກ່ຍ** ໝາຍເຖິງ ຜູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບການແຕ່ງຕັ້ງ ເປັນຜູ້ໄກ່ເກ່ຍ ໂດຍກະຊວງຍຸຕິທຳ;

5. **ຜູ້ໄກ່ເກ່ຍຕ່າງປະເທດ** ໝາຍເຖິງ ຜູ້ທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ໄກ່ເກ່ຍ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງປະເທດໃດໜຶ່ງ ແລະ ໄດ້ຮັບອະນຸຍາດ ຈາກກະຊວງຍຸຕິທຳ ແຫ່ງ ສປປ ລາວ ໃຫ້ມາເຄື່ອນໄຫວໄກ່ເກ່ຍ ຢູ່ ສປປ ລາວ.

**ມາດຕາ 4 ຫຼັກການ ການເຄື່ອນໄຫວ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ມີຄວາມໂປ່ງໃສ ແລະ ມີຄວາມເປັນເອກະລາດ ໃນການໃຫ້ບໍລິການ;
3. ມີຄວາມສະເໝີພາບ ແລະ ຮັກສາຄວາມລັບ ຂອງຄູ່ກໍລະນີ;
4. ຮັບຜິດຊອບຕໍ່ການເຄື່ອນໄຫວຂອງຕົນ ຕາມກົດໝາຍ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບ ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຢູ່ ສປປ ລາວ.

## ໝວດທີ 2
## ເງື່ອນໄຂ ແລະ ການສ້າງຕັ້ງ

**ມາດຕາ 6 ເງື່ອນໄຂການສ້າງຕັ້ງ**

ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສ້າງຕັ້ງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຊື່, ທີ່ຕັ້ງ ແລະ ຫ້ອງການ ທີ່ເໝາະສົມ;
2. ມີຜູ້ໄກ່ເກ່ຍຢ່າງໜ້ອຍ ຫ້າ ຄົນ ໃນນີ້ ໃຫ້ມີຜູ້ທີ່ຈົບກົດໝາຍຊັ້ນສູງຂຶ້ນໄປຢ່າງໜ້ອຍ ສອງ ຄົນ ແລະ ສາມາດມີຜູ້ໄກ່ເກ່ຍຕ່າງປະເທດໄດ້ ແຕ່ບໍ່ໃຫ້ເກີນເຄິ່ງໜຶ່ງຂອງຈຳນວນຜູ້ໄກ່ເກ່ຍທັງໝົດໃນເວລາສ້າງຕັ້ງ;
3. ມີເລກປະຈຳຕົວຜູ້ເສຍອາກອນ ຂອງຜູ້ໄກ່ເກ່ຍ ພາຍໃນ ແລະ ຕ່າງປະເທດ ໃນເວລາສ້າງຕັ້ງ;
4. ມີຄວາມສາມາດກຸ້ມຕົນເອງທາງດ້ານການເງິນ;
5. ມີກົດລະບຽບພາຍໃນຂອງຕົນ.

**ມາດຕາ 7 ການປະກອບເອກະສານ ແລະ ການຂໍອະນຸຍາດສ້າງຕັ້ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດສ້າງຕັ້ງ ຕາມແບບພິມທີ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດກໍານົດ;
2. ກົດລະບຽບ ແລະ ໂຄງຮ່າງການຈັດຕັ້ງ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;
3. ຊີວະປະຫວັດຫຍໍ້, ໃບຢັ້ງຢືນບ່ອນຢູ່, ໃບແຈ້ງໂທດ ຂອງຜູ້ສ້າງຕັ້ງ ພ້ອມດ້ວຍບັນຊີລາຍຊື່ບຸກຄະລາກອນ;
4. ເອກະສານຢັ້ງຢືນກ່ຽວກັບການເປັນຜູ້ໄກ່ເກ່ຍ ທີ່ໄດ້ຮັບການແຕ່ງຕັ້ງ ຫຼື ອະນຸຍາດ ໂດຍກະຊວງຍຸຕິທໍາ;
5. ເອກະສານຢັ້ງຢືນຖານະທາງດ້ານການເງິນ ຂອງຜູ້ຂໍອະນຸຍາດສ້າງຕັ້ງ;
6. ເອກະສານກ່ຽວກັບທີ່ຕັ້ງ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ.

ພາຍຫຼັງທີ່ປະກອບເອກະສານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ຂ້າງເທິງນີ້ແລ້ວ ໃຫ້ຍື່ນຕໍ່ກະຊວງຍຸຕິທໍາ.

**ມາດຕາ 8 ການພິຈາລະນາຂໍອະນຸຍາດສ້າງຕັ້ງ**

ພາຍຫຼັງໄດ້ຮັບເອກະສານ ທີ່ຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງຍຸຕິທໍາ ພິຈາລະນາ ອະນຸຍາດສ້າງຕັ້ງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ພາຍໃນກໍານົດເວລາ ສິບວັນ ລັດຖະການ.

ໃນກໍລະນີເຫັນວ່າ ເອກະສານ ຫຼື ເງື່ອນໄຂ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ສະເໜີຊາບ ພາຍໃນກໍານົດເວລາດັ່ງກ່າວ.

ການເຄື່ອນໄຫວບໍລິການ ໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ເລີ່ມແຕ່ວັນໄດ້ຮັບອະນຸຍາດ ສ້າງຕັ້ງເປັນຕົ້ນໄປ ໂດຍມີອາຍຸການເຄື່ອນໄຫວໃຫ້ບໍລິການ ສາມປີ ແລະ ສາມາດຕໍ່ໄດ້.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 9 ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີດັ່ງນີ້:

1. ໜ່ວຍງານສັງລວມ-ບໍລິຫານ;
2. ໜ່ວຍງານຄຸ້ມຄອງການໄກ່ເກ່ຍຂໍ້ຂັດແຍ່ງ;
3. ໜ່ວຍງານອື່ນ ຕາມຄວາມເໝາະສົມ.

**ມາດຕາ 10 ໂຄງປະກອບບຸກຄະລາກອນ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ປະກອບດ້ວຍຫົວໜ້າ, ຮອງຫົວໜ້າ, ຫົວໜ້າໜ່ວຍງານ ແລະ ພະນັກງານຊ່ວຍວຽກຈໍານວນໜຶ່ງຕາມຄວາມເໝາະສົມ ຊຶ່ງໄດ້ກໍານົດໄວ້ໃນລະບຽບພາຍໃນຂອງຕົນ.

ຫົວໜ້າຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ຮັບຜິດຊອບການປະຕິບັດສິດ, ໜ້າທີ່ ແລະ ພັນທະ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕາມທີ່ກໍານົດໄວ້ໃນ ມາດຕາ 11 ແລະ 12 ຂອງດໍາລັດສະບັບນີ້. ໃນເວລາຕິດຂັດ ຫົວໜ້າຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕ້ອງມອບສິດໃຫ້ຮອງຫົວໜ້າຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ຮັກສາການແທນຕົນ.

ຮອງຫົວໜ້າຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ຊ່ວຍວຽກຫົວໜ້າຫ້ອງ ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ໃນການປະຕິບັດສິດ, ໜ້າທີ່ ແລະ ພັນທະ ຂອງຫ້ອງ ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ຮັບຜິດຊອບວຽກໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ.

ຫົວໜ້າໜ່ວຍງານ ເປັນເສນາທິການໃຫ້ຄະນະຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ໃນການເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນ ນອກຈາກນັ້ນ ຍັງມີພະນັກງານຊ່ວຍວຽກຈຳນວນໜຶ່ງ.

## ໝວດທີ 4
## ສິດ, ໜ້າທີ່ ແລະ ພັນທະ

### ມາດຕາ 11 ສິດ ແລະ ໜ້າທີ່

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ຮັບຄຳຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ແລະ ບັນທຶກການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ ເຂົ້າໃນການໄກ່ເກ່ຍຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;
4. ໃຫ້ຄຳປຶກສາ, ສະໜອງຂໍ້ມູນ ຂ່າວສານ, ແນະນຳຄູ່ກໍລະນີ ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
5. ຕິດຕໍ່ພົວພັນຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ;
6. ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຜົນຂອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
7. ເກັບຄ່າບໍລິການໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ເກັບຄ່າແຮງງານ ຂອງຜູ້ໄກ່ເກ່ຍ;
8. ຄິດໄລ່, ເກັບ ແລະ ຫັກອາກອນລາຍໄດ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ລະບຽບການ ທີ່ກ່ຽວຂ້ອງ;
9. ຄຸ້ມຄອງຂໍ້ມູນ ຂ່າວສານ, ເກັບກຳສະຖິຕິ ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
10. ຄົ້ນຄວ້າ ແລະ ນຳສະເໜີ ຕໍ່ກະຊວງຍຸຕິທຳ ເພື່ອແຕ່ງຕັ້ງ, ເພີ່ມ ຫຼື ຫຼຸດ ຈຳນວນຜູ້ໄກ່ເກ່ຍ ທີ່ເປັນສະມາຊິກສ້າງຕັ້ງ;
11. ເຂົ້າຮ່ວມຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ຕ່າງປະເທດ ຕາມການອະນຸຍາດ;
12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປະຈຳປີ ໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 12 ພັນທະ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ;
2. ແຈ້ງໃຫ້ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ບ່ອນທີ່ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນຕັ້ງຢູ່ ພາຍຫຼັງໄດ້ຮັບອະນຸຍາດສ້າງຕັ້ງ ຫຼື ມີການຍົກຍ້າຍ;
3. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ມອບອາກອນລາຍໄດ້ເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ອາກອນລາຍໄດ້ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການດຳເນີນການໄກ່ເກ່ຍ
## ແລະ ການປະຕິບັດຜົນຂອງການໄກ່ເກ່ຍ

**ມາດຕາ 13 ການດຳເນີນການໄກ່ເກ່ຍ**

ການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ປະຕິບັດຕາມຫຼັກການ, ຂັ້ນຕອນການໄກ່ເກ່ຍ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 14 ການປະຕິບັດຜົນຂອງການໄກ່ເກ່ຍ**

ຜົນຂອງການໄກ່ເກ່ຍ ໃຫ້ຄູ່ກໍລະນີເປັນຜູ້ປະຕິບັດເອງ ຫຼື ປະຕິບັດ ໂດຍອີງການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## ໝວດທີ 6
## ແຫຼ່ງລາຍຮັບ, ການເກັບ ແລະ ການຄຸ້ມຄອງ
## ຄ່າບໍລິການ, ອາກອນລາຍໄດ້ ແລະ ຄ່າແຮງງານ

**ມາດຕາ 15 ແຫຼ່ງລາຍຮັບ**

ລາຍຮັບຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ໄດ້ມາຈາກແຫຼ່ງ ດັ່ງນີ້:

1. ການປະກອບສ່ວນຂອງຜູ້ໄກ່ເກ່ຍ ໃນເວລາສ້າງຕັ້ງ;
2. ການປະກອບສ່ວນຂອງຜູ້ໄກ່ເກ່ຍ ທີ່ໄດ້ຮັບຄ່າແຮງງານຈາກການໄກ່ເກ່ຍຂໍ້ຂັດແຍ່ງ ຢູ່ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;
3. ຄ່າບໍລິການໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຄ່າບໍລິການ ແລະ ການປະກອບສ່ວນຂອງຜູ້ໄກ່ເກ່ຍ ໃຫ້ກຳນົດໄວ້ໃນກົດລະບຽບພາຍໃນຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ.

**ມາດຕາ 16 ການເກັບ ແລະ ການຄຸ້ມຄອງ ຄ່າບໍລິການ ແລະ ອາກອນລາຍໄດ້**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ເກັບ ແລະ ຄຸ້ມຄອງຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນຂອງຕົນ.

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ ຄິດໄລ່, ເກັບ, ຫັກ ແລະ ຄຸ້ມຄອງອາກອນລາຍໄດ້ ຂອງຜູ້ໄກ່ເກ່ຍ ແລະ ຄະນະກຳມະການໄກ່ເກ່ຍ ແລ້ວມອບເຂົ້າງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ອາກອນລາຍໄດ້.

**ມາດຕາ 17 ການເກັບ ແລະ ການຄຸ້ມຄອງຄ່າແຮງງານ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເປັນຜູ້ເກັບ ແລະ ຄຸ້ມຄອງຄ່າແຮງງານ ໂດຍປະຕິບັດຕາມດຳລັດວ່າດ້ວຍ ຄ່າແຮງງານຂອງຜູ້ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ລັດຖະບານປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 7
## ການໂຈະ, ການຖອນ ແລະ ການສິ້ນສຸດ ການເຄື່ອນໄຫວ

**ມາດຕາ 18 ການໂຈະການເຄື່ອນໄຫວ**

ການເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຈະຖືກໂຈະໂດຍ ກະຊວງຍຸຕິທຳ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ການເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນບໍ່ຖືກຕ້ອງຕາມຈຸດປະສົງທີ່ໄດ້ຮັບອະນຸຍາດ;
2. ລະເມີດກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ກົດໝາຍ, ສົນທິສັນຍາ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ລັດ ແລະ ຄູ່ກໍລະນີ;
3. ຜູ້ໄກ່ເກ່ຍທີ່ເປັນສະມາຊິກສ້າງຕັ້ງ ບໍ່ຄົບຕາມຈຳນວນ ທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂໍ້ 2 ຂອງ ດຳລັດສະບັບນີ້;
4. ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ສະເໜີ ຂໍໂຈະການເຄື່ອນໄຫວຂອງຕົນເປັນລາຍລັກອັກສອນ.

ກະຊວງຍຸຕິທຳ ພິຈາລະນາ ໂຈະການເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ພາຍໃນກຳນົດ ສິບຫ້າວັນ ພາຍຫຼັງ ທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ແຕ່ບໍ່ມີການປັບປຸງແກ້ໄຂ ຫຼື ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີ ເປັນຕົ້ນໄປ.

**ມາດຕາ 19 ການຖອນໃບອະນຸຍາດ**

ກະຊວງຍຸຕິທຳ ຈະຖອນໃບອະນຸຍາດເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ພາຍຫຼັງ ທີ່ໄດ້ມີການໂຈະ ແຕ່ບໍ່ມີການປັບປຸງແກ້ໄຂຕາມກຳນົດເວລາທີ່ໄດ້ກຳນົດໄວ້ ໃນໜັງສືແຈ້ງໂຈະ ເປັນຕົ້ນໄປ.

**ມາດຕາ 20 ການສິ້ນສຸດການເຄື່ອນໄຫວ**

ການເຄື່ອນໄຫວຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ສະເໜີຂໍຢຸດຕິການເຄື່ອນໄຫວຂອງຕົນ;
2. ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ບໍ່ຕໍ່ອາຍຸການເຄື່ອນໄຫວ;
3. ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຖືກຖອນໃບອະນຸຍາດເຄື່ອນໄຫວ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 21 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວບໍລິການໃນຮູບແບບຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງເອກະສານ, ນຳໃຊ້ເອກະສານປອມ ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ໝິ່ນປະໝາດ, ໃສ່ຮ້າຍປ້າຍສີ, ນາບຂູ່, ທຳຮ້າຍຮ່າງກາຍຜູ້ໄກ່ເກ່ຍ, ພະນັກງານ-ລັດຖະກອນ ທີ່ປະຕິບັດໜ້າທີ່ ກ່ຽວກັບ ການບໍລິການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ຍຸຍົງໃຫ້ຜູ້ອື່ນ ບໍ່ໃຫ້ໃຊ້ບໍລິການ ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;
5. ໃຫ້ ຫຼື ຮັບສິນບົນ, ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 22 ຂໍ້ຫ້າມ ສຳລັບຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ

ຫ້າມຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂໍ້ຂັດແຍ່ງ ໂດຍບໍ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ ຍົກເວັ້ນກໍລະນີ ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ;
2. ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ, ສົມຮູ້ຮ່ວມຄິດ, ປອມແປງ, ທຳລາຍເອກະສານ ຫຼື ຫຼັກຖານ ກ່ຽວກັບ ການໄກ່ເກ່ຍຂໍ້ຂັດແຍ່ງ;
3. ເປັນສື່ກາງໃນການຮັບ, ທວງເອົາເງິນ ຫຼື ຜົນປະໂຫຍດອື່ນ ທີ່ບໍ່ຖືກຕ້ອງຈາກຄູ່ກໍລະນີ;
4. ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ທີ່ພົວພັນເຖິງຜົນປະໂຫຍດ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນເອງ ແລະ ໄກ່ເກ່ຍຂໍ້ຂັດແຍ່ງອື່ນ ທີ່ບໍ່ແມ່ນຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ບັງຄັບ, ນາບຂູ່ ຄູ່ກໍລະນີ, ຜູ້ເຂົ້າຮ່ວມ ແລະ ຜູ້ໄກ່ເກ່ຍ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາ
## ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ

### ມາດຕາ 23 ອົງການຄຸ້ມຄອງ

ອົງການຄຸ້ມຄອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ປະກອບດ້ວຍ:

1. ກະຊວງຍຸຕິທຳ;
2. ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ນອກຈາກສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ ກະຊວງຍຸຕິທຳ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ອອກຂໍ້ຕົກລົງ ສ້າງຕັ້ງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕາມການສະເໜີ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ພິຈາລະນາ ອອກ, ຕໍ່ ໃບອະນຸຍາດ ເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

3. ພິຈາລະນາ ໂຈະການເຄື່ອນໄຫວ ຫຼື ຖອນໃບອະນຸຍາດເຄື່ອນໄຫວ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕາມການສະເໜີ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ປະຕິບັດ ນະໂຍບາຍຍ້ອງຍໍ ຫຼື ນຳໃຊ້ມາດຕະການ ຕໍ່ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນອກຈາກສິດ ແລະ ໜ້າທີ່ ຕາມທີ່ໄດ້ ກຳນົດໄວ້ ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ, ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບ ວຽກງານໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ສະເໜີ ລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ;

2. ຄົ້ນຄວ້າ ການສະເໜີສ້າງຕັ້ງ, ຕໍ່, ໂຈະການເຄື່ອນໄຫວ ຫຼື ຖອນໃບອະນຸຍາດເຄື່ອນໄຫວ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ເພື່ອສະເໜີ ລັດຖະມົນຕີກະຊວງຍຸຕິທຳ ພິຈາລະນາ;

3. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ຮ່າງກົດລະບຽບພາຍໃນ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

4. ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ແກ່ຜູ້ໄກ່ເກ່ຍດ້ວຍການເຂົ້າຮ່ວມຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ຕິດຕາມ ແລະ ປະເມີນການເຄື່ອນໄຫວ ຂອງຜູ້ໄກ່ເກ່ຍ ແລະ ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

6. ຄົ້ນຄວ້າ ເພື່ອນຳສະເໜີຕໍ່ ລັດຖະມົນຕີກະຊວງຍຸຕິທຳ ໃນການປະຕິບັດນະໂຍບາຍ ຍ້ອງຍໍ ແລະ ນຳໃຊ້ມາດຕະການ ຕໍ່ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກຍຸຕິທຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ນອກຈາກສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ ພະແນກຍຸຕິທຳແຂວງ, ນະຄອນຫຼວງ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ສຶກສາອົບຮົມກົດໝາຍ ແລະ ລະບຽບການ ກ່ຽວກັບ ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ຕິດຕາມ ແລະ ຊຸກຍູ້ການເຄື່ອນໄຫວ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ທີ່ຕັ້ງຢູ່ ພາຍໃນແຂວງ, ນະຄອນຫຼວງ;

3. ສະຫຼຸບ, ລາຍງານ ກ່ຽວກັບ ການຕິດຕາມ, ຊຸກຍູ້ການເຄື່ອນໄຫວຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕໍ່ກະຊວງຍຸຕິທຳ ຢ່າງເປັນປົກກະຕິ;

4. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 ອົງການກວດກາ**

ອົງການກວດກາຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແມ່ນອົງການດຽວກັນກັບ ອົງການຄຸ້ມຄອງ ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງດຳລັດສະບັບນີ້ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 ເນື້ອໃນການກວດກາ**

ເນື້ອໃນຕົ້ນຕໍຂອງການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
2. ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ການໄກ່ເກ່ຍຂໍ້ແຍ່ງທາງດ້ານເສດຖະກິດ;
3. ການເຄື່ອນໄຫວ ຂອງຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ;
4. ການປະຕິບັດພັນທະອາກອນລາຍໄດ້.

**ມາດຕາ 29 ຮູບການການກວດກາ**

ການກວດກາຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 10
## ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 30 ເຄື່ອງໝາຍ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີເຄື່ອງໝາຍສະເພາະຂອງຕົນເພື່ອນຳໃຊ້ ເຂົ້າໃນວຽກງານ.

**ມາດຕາ 31 ຕາປະທັບ**

ຫ້ອງການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ມີຕາປະທັບ ເພື່ອນຳໃຊ້ເຂົ້າໃນວຽກງານຂອງຕົນ.

ລາຍລະອຽດ ກ່ຽວກັບ ການຂໍອະນຸຍາດ ແລະ ການນຳໃຊ້ຕາປະທັບ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 32 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 33 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ**

ກະຊວງຍຸຕິທຳ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 35 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 10 ຕຸລາ 2022 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ